Statewide Processing Center
PO Box 14620
Salem, OR  97309

P.O. Box 14015, Salem, OR  97309
Voice: 1-800-699-9075
FAX: 503-378-5628
TTY: 711
www.ohp.oregon.gov

September 2022

Case number:

# ອັບເດດຂໍ້ມູນຕິດຕໍ່ຂອງທ່ານຢູ່ສະເໜີ ເພື່ອຊ່ວຍຮັກສາຜົນປະໂຫຍດຂອງທ່ານ.

ຮຽນສະມາຊິກ Oregon Health Plan,

ການຄຸ້ມຄອງຈາກແຜນສຸຂະພາບ Oregon Health Plan (OHP) ຂອງທ່ານ ບໍ່ມີການປ່ຽນແປງຫຍັງ! ຈົດໝາຍສະບັບນີ້ແມ່ນກ່ຽວກັບບາດກ້າວຕ່າງໆ ທີ່ທ່ານຄວນປະຕິບັດເພື່ອຊ່ວຍຮັກສາຜົນປະໂຫຍດການຄຸ້ມຄອງຂອງທ່ານໃນອະນາຄົດ.

**ວິທີອັບເດດຂໍ້ມູນຕິດຕໍ່ຂອງທ່ານ:**

1. **ບອກໃຫ້ພວກເຮົາຮູ້ທັນທີ ເມື່ອທ່ານປ່ຽນທີ່ຢູ່ທາງໄປສະນີ, ທີ່ຢູ່ອີເມວ ຫຼື ເບີໂທລະສັບ.** ເບິ່ງໜ້າ 2 ສໍາລັບວິທີລາຍງານການປ່ຽນແປງຕ່າງໆ.
2. **ກວດເບິ່ງໄປສະນີຂອງທ່ານ ແລະອ່ານແຈ້ງການທີ່ພວກເຮົາສົ່ງໃຫ້ທ່ານ.** ຈົ່ງສົ່ງຂໍ້ມູນໃຫ້ພວກເຮົາສະເໜີສໍາລັບຂໍ້ມູນທີ່ພວກເຮົາຖາມ.
3. **ຮັບຮູ້ຂ່າວສານຢູ່ສະເໜີຈາກຂ່າວສານຫຼ້າສຸດຂອງ OHP.** ໄປທີ່ເວັບໄຊ **OHP.Oregon.gov** ຫຼື ຖາມອົງການຫຸ້ນສ່ວນໃນຊຸມຊົນ OHP ໃນເຂດຂອງທ່ານ. ເບິ່ງໄດ້ອີກແຫ່ງໜຶ່ງທີ່ **bit.ly/ohplocalhelp**.

**ສິ່ງທີ່ທ່ານຈໍາເປັນຕ້ອງຮູ້:**

## 1. ການຄຸ້ມຄອງຈາກ OHP ຂອງທ່ານຍັງຄົງໃຊ້ການໄດ້ຢູ່.

ທ່ານບໍ່ຈໍາເປັນຕ້ອງຕອບຈົດໝາຍສະບັບນີ້. ຖ້າພວກເຮົາຕ້ອງການຂໍ້ມູນເພີ່ມເຕີມ, ພວກເຮົາຈະບອກໃຫ້ທ່ານຮູ້ — ຕາບໃດທີ່ພວກເຮົາຍັງມີຂໍ້ມູນຕິດຕໍ່ໃນປັດຈຸບັນຂອງທ່ານ.

## 2. ການປ່ຽນແປງທີ່ກໍາລັງຈະມີຕໍ່ OHP ຫຼັງຈາກພາວະສຸກເສີນໂຄວິດ-19:

ໃນລະຫວ່າງເກີດການລະບາດຂອງໂຣກໂຄວິດ-19, ສະມາຊິກສ່ວນຫຼາຍໄດ້ຮັກສາ OHP ຂອງຕົນໄວ້, ເຖິງແມ່ນວ່າ ເຂົາເຈົ້າໄດ້ມີການປ່ຽນແປງໃນຊີວິດຂອງເຂົາເຈົ້າ, ເຊັ່ນ ການມີລາຍໄດ້ເພີ່ມຂຶ້ນ.  ນີ້ກໍແມ່ນຍ້ອນການປ່ຽນແປງທາງນະໂຍບາຍ ພາຍໃຕ້ສະພາບການພາວະສຸກເສີນຈາກໂຄວິດ-19.

## 3. ຫຼັງຈາກພາວະສຸກເສີນໂຄວິດ-19 ສິ້ນສຸດລົງ:

ພວກເຮົາຈະຕິດຕໍ່ທ່ານ ຖ້າວ່າ ພວກເຮົາຕ້ອງການຂໍ້ມູນເພີ່ມເຕີມ ເພື່ອເບິ່ງວ່າ ທ່ານຍັງຄົງມີຄຸນສົມບັດເໝາະສົມສຳລັບ OHP ຫຼືບໍ່.
ພວກເຮົາຕ້ອງການຊ່ວຍໃຫ້ທ່ານມີຄວາມພ້ອມສຳລັບສິ່ງທີ່ຈະເກີດຂຶ້ນ. ຖ້າວ່າ ພວກເຮົາບໍ່ສາມາດຕິດຕໍ່ຫາທ່ານໄດ້, ທ່ານອາດສູນເສັຽການຄຸ້ມຄອງຂອງທ່ານ. ການອັບເດດຂໍ້ມູນຕິດຕໍ່ປັດຈຸບັນຂອງທ່ານຢູ່ສະເໝີ ຈະຊ່ວຍໃຫ້ທ່ານຢູ່ໃນການຄຸ້ມຄອງຕະຫຼອດເວລາ.

## ວິທີການລາຍງານການປ່ຽນແປງຕ່າງໆ

ທ່ານສາມາດລາຍງານການປ່ຽນແປງຕ່າງໆ ໄດ້ໃນຫຼາຍວິທີດັ່ງນີ້:

**ອົງການປະສານງານການດູແລຂອງທ່ານ (CCO)**

ນີ້ແມ່ນອົງການທີ່ຈະຈັດການ OHP ຂອງທ່ານ.

- ທ່ານສາມາດລະບຸ CCO ຂອງທ່ານໄດ້ໂດຍການກວດກາເບິ່ງທີ່ບັດປະຈຳຕົວສະມາຊິກຂອງທ່ານ.
- ເບິ່ງຂໍ້ມູນຕິດຕໍ່ສຳລັບ CCO ຂອງທ່ານທີ່: **bit.ly/ccoplans**.

**ທາງອອນລາຍ**

benefits.oregon.gov

ສ້າງບັນຊີ ຫຼື ລັອກອິນເຂົ້າລະບົບບັນຊີໃນປັດຈຸບັນຂອງທ່ານ.
ມີໃນພາສາອັງກິດ ຫຼື ສະເປນ.

**ທາງໂທລະສັບ:**

ສູນບໍລິການລູກຄ້າ ONE

- 1-800-699-9075 (TTY 711)
- ວັນຈັນ ຮອດ ວັນສຸກ ເວລາ 7 ໂມງເຊົ້າ ຫາ 6 ໂມງແລງ. ເວລາທາງຝັ່ງປາຊີຟິກ.
- ມີບໍລິການນາຍພາສາ.
- ນອກຈາກນີ້ ທ່ານຍັງສາມາດຂໍຮັບບໍລິການນາຍພາສາໃນພາສາທີ່ທ່ານຕ້ອງການໄດ້ກ່ອນການເວົ້າລົມກັບເຈົ້າໜ້າທີ່. ຊອກເບິ່ງພາສາທີ່ເວັບໄຊ benefits.oregon.gov.

**ໄປພົບດ້ວຍຕົນເອງ ຫຼື ໂດຍທາງໂທລະສັບ:**

ຫ້ອງການຕ່າງໆ ຂອງໂຄງການ Aging and People with Disabilities, Self-Sufficiency Programs ຫຼື Area Agency on Aging

- ເບິ່ງສະຖານທີ່ຕັ້ງ ແລະເບີໂທລະສັບໄດ້ທີ່ **Oregon.gov/DHS/Offices**.
- ກະລຸນາໂທລ່ວງໜ້າກ່ອນໄປທີ່ຫ້ອງການ.
- ມີບໍລິການນາຍພາສາ.

ຂອບໃຈ,
ແຜນສຸຂະພາບ Oregon Health Plan

ທ່ານສາມາດຂໍຮັບເອົາເອກະສານນີ້ເປັນພາສາອື່ນ, ຕົວພິມຂະໜາດໃຫຍ່, ຕົວອັກສອນເບຣລສຳລັບຄົນຕາບອດ ຫຼື ໃນຮູບແບບທີ່ທ່ານຕ້ອງການໄດ້. ນອກຈາກນີ້ ທ່ານຍັງສາມາດຂໍເອົານາຍພາສາໄດ້ດ້ວຍ. ການຊ່ວຍເຫຼືອນີ້ແມ່ນໃຫ້ຟຣີ. ໂທ 800-699-9075 ຫຼື 711 (TTY). ພວກເຮົາຮັບສາຍໂທຣີເລສຳລັບຄົນຫູໜວກ.